# Skills on court enforcement
# ທັກສະການຈັດຕັ້ງປະຕິບັດຄຳຕັດສິນຂອງສານ

*Poumy sinlatanathamatheva*
*Tel: 008562055346584*
*Email: poumysinlata09@gmail.com*
*Vientiane Capital, Laos.*

## Lecture 15
## Review lesson
## ທວນຄືນບົດຮຽນ

### 1. ຄວາມໝາຍຂອງການປະຕິບັດຄຳຕັດສິນຂອງສານ

ການປະຕິບັດຄຳຕັດສິນຂອງສານ ແມ່ນ ການເຄື່ອນໄຫວຂອງອົງການປະຕິບັດຄຳຕັດສິນຂອງສານ ແລະ/ຫຼື ຄູ່ຄວາມໃນການນຳເອົາຄຳສັ່ງ, ຄຳຊີ້ຂາດ, ຄຳຕັດສິນ ແລະ ຄຳພິພາກສາ ຂອງສານທີ່ໃຊ້ໄດ້ຢ່າງເດັດຂາດ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍການປະຕິບັດຄຳຕັດສິນຂອງສານມາປະຕິບັດໃຫ້ຖືກຕ້ອງ ແລະ ປາກົດຜົນເປັນຈິງ ເພື່ອຟື້ນຟູສິດ ແລະ ຜົນປະໂຫຍດຂອງລັດ, ລວມໝູ່, ການຈັດຕັ້ງ ແລະ ບຸກຄົນ ທີ່ຖືກລະເມີດ ຫຼື ສູນເສຍໄປ.

ການປະຕິບັດຄຳຕັດສິນຂອງສານ ແມ່ນມີຄວາມໝາຍສຳຄັນຫຼາຍໃນຂະບວນການຍຸຕິທຳ, ມັນແມ່ນໝາກຜົນຂອງການປະຕິບັດກົດໝາຍໃຫ້ປະກົດຜົນເປັນຈິງ, ເຊິ່ງຕ້ອງໄດ້ອາໃສອົງການຄຸ້ມຄອງ ແລະ ອົງການປະຕິບັດຄຳຕັດສິນຂອງສານ ເປັນອົງການໃນການຮັບຜິດຊອບໃນການປະຕິບັດຄຳຕັດສິນຂອງສານ, ຈັດຕັ້ງ ແລະ ເຄື່ອນໄຫວໃຫ້ໄປຕາມກົດໝາຍວ່າດ້ວຍການຈັດຕັ້ງປະຕິບັດຄຳຕັດສິນຂອງສານ ເວົ້າລວມ, ເວົ້າສະເພາະແມ່ນການປະຕິບັດຄຳຕັດສິນຂອງສານ ເຊິ່ງວຽກງານດັ່ງກ່າວເປັນວຽກງານທີ່ຫຍຸ້ງຍາກ ລະອຽດອ່ອນ ມີຄວາມຈຳເປັນຕ້ອງເຂົ້າໃຈເຖິງວິທີ, ຫຼັກການ ແລະ ຂັ້ນຕອນຢ່າງເລິກເຊິ່ງ ເພື່ອໃຫ້ການນຳເອົາຄຳຕັດສິນຂອງສານ ທີ່ໃຊ້ໄດ້ຢ່າງເດັດຂາດນັ້ນມາປະຕິບັດໃຫ້ປະກົດຜົນເປັນຈິງ.

- ຄຳຕັດສິນຂອງສານ ທີ່ໃຊ້ໄດ້ຢ່າງເດັດຂາດ ແມ່ນ ຄຳຕັດສິນ ຫຼື ຄຳພິພາກສາ ຊຶ່ງຄູ່ຄວາມ, ບຸກຄົນທີສາມ ບໍ່ໄດ້ຂໍອຸທອນ, ບໍ່ໄດ້ຂໍລຶບລ້າງ ຫຼື ຫົວໜ້າອົງການໄອຍະການປະຊາຊົນ ບໍ່ໄດ້ສະເໜີຄັດຄ້ານ; ຄຳຊີ້ຂາດ, ຄຳພິພາກສາຂອງສານປະຊາຊົນສູງສຸດ; ຄຳສັ່ງໃຫ້ປະຕິບັດຜົນການໄກ່ເກ່ຍຂອງສານ; ຄຳຊີ້ຂາດກ່ຽວກັບການປະຕິບັດບົດບັນທຶກການໄກ່ເກ່ຍ ຫຼື ຄຳຕັດສິນຂອງກຳມະການຕັດສິນພາຍໃນ; ຄຳຕັດສິນຮັບຮູ້ຄຳຕັດສິນຂອງສານຕ່າງປະເທດ ຫຼື ຄຳຕັດສິນຢັ້ງຢືນ ຄຳຕັດສິນຂອງກຳມະການຕັດສິນຕ່າງປະເທດ.

### 2. ທັກສະໃນການປະຕິບັດຄຳຕັດສິນຂອງສານ

ທັກສະໃນການປະຕິບັດຄຳຕັດສິນຂອງານຄະດີແພ່ງ ແມ່ນຄວາມຊ່ຽວຊານ ຫຼື ຄວາມຊຳນິຊຳນານ ຂອງພະນັກງານປະຕິບັດຄຳຕັດສິນຂອງສານ ໃນການນຳເອົາຄຳຕັດສິນມາປະຕິບັດໃຫ້ມີຄວາມຖືກຕ້ອງ, ວ່ອງໄວ ແລະ ຍຸຕິທຳ, ໃຫ້ທ່ວງທັນກັບເວລາທີ່ໄດ້ກຳນົດໄວ້ໃນກົດໝາຍ.

ການປະຕິບັດຄຳຕັດສິນຂອງສານ ແມ່ນ ການເຄື່ອນໄຫວຂອງອົງການປະຕິບັດຄຳຕັດສິນຂອງສານ ແລະ/ຫຼື ຄູ່ຄວາມໃນການນຳເອົາຄຳສັ່ງ, ຄຳຊີ້ຂາດ, ຄຳຕັດສິນ ແລະ ຄຳພິພາກສາ ຂອງສານທີ່ໃຊ້ໄດ້ຢ່າງເດັດຂາດ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍປະຕິບັດຄຳຕັດສິນຂອງສານ ມາປະຕິບັດໃຫ້ຖືກຕ້ອງ ແລະ ປາກົດຜົນເປັນຈິງ ເພື່ອຟື້ນຟູສິດ ແລະ ຜົນປະໂຫຍດຂອງລັດ, ລວມໝູ່, ການຈັດຕັ້ງ ແລະ ບຸກຄົນ ທີ່ຖືກລະເມີດ ຫຼື ສູນເສຍໄປ.

**3. ຄວາມໝາຍການປະຕິບັດຄຳຕັດສິນຄະດີອາຍາ**

ການປະຕິບັດຄຳຕັດສິນຄະດີອາຍາແມ່ນການເຄື່ອນໄຫວຂອງລັດ, ໂດຍແມ່ນບັນດາອົງການລັດທີ່ມີສິດອຳນາດກ່ຽວຂ້ອງດຳເນີນການເພື່ອປະຕິບັດບັນດາຄຳຕັດສິນຂອງສານປະຊາຊົນທີ່ມີຜົນສັກສິດໃຊ້ໄດ້ຢ່າງເດັດຂາດ; ການປະຕິບັດຮັບປະກັນດ້ວຍບັນດາມາດຕະການຂອງລັດຕາມຂັ້ນຕອນ, ລະບຽບການຈະແຈ້ງ; ທຸກອົງການ, ການຈັດຕັ້ງ ແລະ ພົນລະເມືອງຕ້ອງເຄົາລົບ; ການຈັດຕັ້ງ ແລະ ບຸກຄົນທີ່ກ່ຽວຂ້ອງຕ້ອງປະຕິບັດຢ່າງເຂັ້ມງວດ.

ການປະຕິບັດຄຳຕັດສິນຂອງສານຄະດີອາຍາ ກໍຄືການນຳເອົາຄຳສັ່ງ, ຄຳຊີ້ຂາດ, ຄຳຕັດສິນ ແລະ ຄຳພິ ພາກສາຂອງສານທີ່ໃຊ້ໄດ້ຢ່າງເດັດຂາດ ແລະ ນິຕິກຳອື່ນໆກ່ຽວກັບການໃຊ້ແທນຄ່າເສຍຫາຍທາງແພ່ງ, ໂທດປັບໃໝ, ໂທດຮິບວັດຖຸສິ່ງຂອງ ແລະ ໂທດດັດສ້າງໂດຍບໍ່ໄດ້ຕັດອິດສາລະພາບ ຕາມທີ່ໄດ້ກຳນົດໄວ້ ໃນກົດໝາຍວ່າດ້ວຍການປະຕິບັດຄຳຕັດສິນຂອງສານມາຈັດຕັ້ງປະຕິບັດໃຫ້ຖືກຕ້ອງ ແລະ ປາກົດຜົນເປັນຈິງ ເພື່ອຟື້ນຟູສິດ ແລະ ຜົນປະໂຫຍດຂອງລັດ, ລວມໝູ່ ແລະ ພົນລະເມືອງທີ່ຖືກລະເມີດຫຼືສູນເສຍໄປ ເຊັ່ນດຽວກັນກັບຄຳຕັດສິນຄະດີແພ່ງ, ພຽງແຕ່ການປະຕິບັດຄຳຕັດສິນຄະດີອາຍານີ້ ພະນັກງານຈັດຕັ້ງປະຕິບັດຄຳຕັດສິນຂອງສານຈະປະຕິບັດແຕ່ການໃຊ້ແທນຄ່າເສຍຫາຍທາງແພ່ງ , ໂທດປັບໃໝ, ໂທດຮິບວັດຖຸສິ່ງຂອງ ແລະ ໂທດດັດສ້າງໂດຍບໍ່ໄດ້ຕັດອິດສາລະພາບເທົ່ານັ້ນ.

**4. ຄວາມໝາຍມາດຕະການຕໍ່ການປະຕິບັດຄຳຕັດສິນຂອງສານ**

ມາດຕະການຕໍ່ການປະຕິບັດຄຳຕັດສິນຂອງສານ ແມ່ນມາດຕະການຂອງອົງການປະຕິບັດຄຳຕັດສິນຂອງສານວາງອອກໃນລັກສະນະເປັນຄຳສັ່ງຕ່າງໆ ເພື່ອວາງໃສ່ຜູ້ບໍ່ປະຕິບັດຕາມຄຳຕັດສິນຂອງສານດ້ວຍຄວາມສະມັກໃຈທັງໆທີ່ຜູ້ກ່ຽວມີເງື່ອນໄຂໃນການປະຕິບັດຄຳຕັດສິນຂອງສານ ແຕ່ບໍ່ຍອມປະຕິບັດ, ເພື່ອຮັບປະກັນໃຫ້ຄຳສັ່ງ, ຄຳຊີ້ຂາດ, ຄຳຕັດສິນ ຫຼື ຄຳພິພາກສາຂອງສານທີ່ໃຊ້ໄດ້ຢ່າງເດັດຂາດ ໄດ້ຮັບການປະຕິບັດຢ່າງຖືກຕ້ອງຕາມຂັ້ນຕອນ, ກຳນົດເວລາ ແລະ ລະບຽບກົດໝາຍ.

**5. ຈຸດປະສົງໃນການນຳໃຊ້ມາດຕະການກ່ຽວກັບການປະຕິບັດຄຳຕັດສິນຂອງສານ**

ການນຳໃຊ້ມາດຕະການໃນການປະຕິບັດຄຳຕັດສິນຂອງສານ ກໍເພື່ອເຮັດໃຫ້ການປະຕິບັດຄຳຕັດສິນຂອງສານສຳເລັດຜົນ, ສະນັ້ນ ອົງການປະຕິບັດຄຳຕັດສິນຂອງສານຈະອອກມາດຕະການຕ່າງໆໄດ້ໃນກໍລະນີທີ່ເຫັນວ່າມີເງື່ອນໄຂທາງດ້ານກົດໝາຍ ແລະ ລະບຽບການສະເພາະ.

ກ່ອນອື່ນໝົດ ພະນັກງານປະຕິບັດຄຳຕັດສິນຂອງສານຕ້ອງອອກໝາຍຮຽກ ເພື່ອຮຽກຜູ້ຖືກປະຕິບັດຄຳຕັດສິນຂອງສານ ເຂົ້າມາພົບພະນັກງານປະຕິບັດຄຳຕັດສິນຂອງສານ ແລະ ຮຽກຜູ້ທີ່ໄດ້ຮັບຜົນປະໂຫຍດຈາກຄຳຕັດສິນຂອງສານ ຈຸດປະສົງເພື່ອແຈ້ງຕໍ່ຜູ້ກ່ຽວໃຫ້ຊາບກ່ຽວກັບຄຳຕັດສິນຂອງສານ ແລະ ສຶກສາອົບຮົມໃຫ້ຜູ້ກ່ຽວປະຕິບັດຕາມຄຳຕັດສິນຂອງສານ, ຖ້າຜູ້ກ່ຽວບໍ່ຍອມປະຕິບັດຕາມຄຳຕັດສິນຂອງສານ, ອົງການປະຕິບັດຄຳຕັດສິນຂອງສານ ຈຶ່ງຈຳເປັນຕ້ອງນຳໃຊ້ມາດຕະການໃນການປະຕິບັດຄຳຕັດສິນຂອງສານ.

**6. ການດຳເນີນການຕໍ່ຊັບທີ່ອາຍັດ ຫຼື ຍຶດ ໂດຍການຕົກລົງຂອງຄູ່ຄວາມ**

ຢູ່ ສປປ ລາວ ກ່ຽວກັບການດຳເນີນການຕໍ່ຊັບທີ່ອາຍັດ ຫຼື ຍຶດ, ພະນັກງານປະຕິບັດຄຳຕັດສິນຂອງສານ ຕ້ອງຮຽກຄູ່ຄວາມເຂົ້າມາເພື່ອຕົກລົງກ່ຽວກັບລາຄາຊັບ, ການຕົກລົງດັ່ງກ່າວຕ້ອງເຮັດບົດບັນທຶກ ແລະ ໃຫ້ຖືເອົາລາຄານັ້ນ ເປັນລາຄາປະກາດຂາຍຕາມກົດໝາຍ ຊຶ່ງການຕົກລົງລາຄາດັ່ງກ່າວ ຄູ່ຄວາມສາມາດຕົກລົງໄດ້ທຸກຂັ້ນຕອນຂອງການປະຕິບັດຄຳຕັດສິນຂອງສານ ແລະ ແນະນຳໃຫ້ຜູ້ເປັນເຈົ້າຂອງຊັບດັ່ງກ່າວໄປຂາຍພາຍໃນກຳນົດເວລາທີ່ກຳນົດໄວ້ໃນກົດໝາຍ, ແຕ່ບໍ່ໃຫ້ຕ່ຳກວ່າລາຄາທີ່ຄູ່ຄວາມໄດ້ປະເມີນກັນໃນເບື້ອງຕົ້ນ ຊຶ່ງການແນະນຳດັ່ງກ່າວຕ້ອງເຮັດບົດບັນທຶກ ແລະ ລົງລາຍໄວ້ເປັນຫຼັກຖານ.

ນອກຈາກນີ້ ບົນພື້ນຖານຄວາມເປັນເອກະພາບ ຄູ່ຄວາມສາມາດສະເໜີເອົາຜູ້ຊ່ຽວຊານ ຫຼື ນິຕິບຸກຄົນໃດໜຶ່ງເພື່ອມາຕີລາຄາຊັບ, ການຕີລາຄາຊັບໃນກໍລະນີນີ້ໃຫ້ຫົວໜ້າອົງການປະຕິບັດຄຳຕັດສິນຂອງສານອອກຂໍ້ຕົກລົງໃຫ້ຊ່ຽວຊານ ຫຼື ນິຕິບຸກຄົນດຳເນີນການຕີລາຄາຊັບໂດຍກຳນົດເວລາ, ສະຖານທີ່, ຊັບທີ່ເປັນເປົ້າໝາຍ, ຄວາມຮັບຜິດຊອບຂອງຜູ້ຕີລາຄາ, ຜົນຕອບແທນ ແລະ ບັນຫາສຳຄັນອື່ນ, ພາຍຫຼັງສຳເລັດໃຫ້ຖືເອົາລາຄານັ້ນເປັນລາຄາປະ ກາດຂາຍຕາມຂັ້ນຕອນຂອງກົດໝາຍ.

**7. ຄວາມໝາຍຂອງການຄຸ້ມຄອງຊັບໃນການປະຕິບັດຄຳຕັດສິນຂອງສານ**

ການຄຸ້ມຄອງຊັບໃນການປະຕິບັດຄຳຕັດສິນຂອງສານ ແມ່ນການຄຸ້ມຄອງ, ປົກປັກຮັກສາ ແລະ ຕິດຕາມກວດກາ ຊັບສິນປະເພດຕ່າງໆກ່ຽວກັບສັງຫາລິມະຊັບ ແລະ ອະສັງຫາລິມະຊັບ ເຊັ່ນ: ເງິນ, ຄຳ, ທີ່ດິນ, ເຮືອນ, ອາຄານ, ລົດ, ເຮືອ, ບັນຊີເງິນຝາກ ແລະ ອື່ນໆ ທີ່ໄດ້ກຳນົດໄວ້ຢູ່ໃນຄຳຕັດສິນ ຫຼື ຄຳພິພາກສາຂອງສານ ຊຶ່ງອົງການປະຕິບັດຄຳຕັດສິນຂອງສານໄດ້ອອກຄຳສັ່ງຍຶດ ແລະ ອາຍັດ.

**8. ການໂຈະປະຕິບັດຄຳຕັດສິນຂອງສານ**

ການໂຈະປະຕິບັດຄຳຕັດສິນຂອງສານແມ່ນການຢຸດຕິການເຄື່ອນໄຫວປະຕິບັດຄຳຕັດສິນ, ຄຳຕົກລົງຂອງສານໄວ້ຊົ່ວຄາວເມື່ອມີບ່ອນອີງທາງດ້ານກົດໝາຍ, ເມື່ອໝົດສາເຫດຂອງການໂຈະແລ້ວກໍຕ້ອງສືບຕໍ່ປະຕິບັດ.

ການໂຈະປະຕິບັດຄຳຕັດສິນຂອງສານໄດ້ປະຕິບັດຕາມຂໍ້ກຳນົດຂອງກົດໝາຍວ່າດ້ວຍການປະຕິບັດຄຳຕັດສິນຂອງສານ, ໃນກົດໝາຍດັ່ງກ່າວໄດ້ຍົກໃຫ້ເຫັນບັນດາກໍລະນີທີ່ຈະຖືກໂຈະປະຕິບັດຄຳຕັດສິນຂອງສານ ຫຼື ເວົ້າຢ່າງໜຶ່ງເອີ້ນວ່າສາເຫດທີ່ພາໃຫ້ການປະຕິບັດຄຳຕັດສິນຂອງສານຖືກໂຈະ, ຕາມກົດໝາຍວ່າດ້ວຍການປະຕິບັດຄຳຕັດສິນຂອງສານ, ປະເພດນິຕິກຳການໂຈະປະຕິບັດຄຳຕັດສິນຂອງສານແມ່ນຄຳສັ່ງໂຈະຂອງອົງການປະຕິບັດຄຳຕັດສິນຂອງສານ.

**9. ການປ່ຽນແປງ, ຍົກເລີກ ຫຼື ລົບລ້າງການປະຕິບັດຄຳຕັດສິນຂອງສານ**

ໃນການປະຕິບັດຄຳຕັດສິນຂອງສານ ການປ່ຽນແປງ, ຍົກເລີກ ຫຼື ລົບລ້າງການປະຕິບັດຄຳຕັບສິນຂອງສານແມ່ນວຽກທີ່ອົງການປະຕິບັດຄຳຕັດສິນຂອງສານດຳເນີນການອອກນິຕິກຳດ້ວຍຄຳສັ່ງປ່ຽນແປງ, ຍົກເລີກ ຫຼື ລົບລ້າງສາຍພົວພັນປະຕິບັດຄຳຕັດສິນຂອງສານເມື່ອມີບ່ອນອີງທາງດ້ານກົດໝາຍ ແລະ ເຫດຜົນພຽງພໍ.

ໃນເວລາຈັດຕັ້ງປະຕິບັດຄຳຕັດສິນຂອງສານຕົວຈິງ, ພະນັກງານປະຕິບັດຄຳຕັດສິນຂອງສານມັກຈະມີຄວາມຜິດພາດ, ເປັນຕົ້ນແມ່ນການປະຕິບັດບໍ່ຖືກຕ້ອງ, ບໍ່ສອດຄ່ອງກັບຄຳຕັດສິນຂອງສານ ຫຼື ກົດໝາຍ, ປະຕິບັດບໍ່ຖືກຕ້ອງຕາມຂໍ້ກຳນົດຂອງກົດໝາຍວ່າດ້ວຍການປະຕິບັດຄຳຕັດສິນຂອງສານ ແລະ ລະເມີດລະບຽບການທີ່ກ່ຽວຂ້ອງ, ປະຕິບັດບໍ່ຖືກຕ້ອງຕາມຄຳຕັດສິນ ຫຼື ນິຕິກຳອື່ນຂອງສານ ຫຼື ອາດເປັນຍ້ອນຜູ້ຖືກປະຕິບັດຄຳຕັດສິນຂອງສານໄດ້ເສຍຊີວິດ, ອາຍຸຄວາມໃນການປະຕິບັດຄຳຕັດສິນຂອງສານໝົດໄປ, ຜູ້ຖືກປະຕິບັດຄຳຕັດສິນຂອງສານໄດ້ຮັບອະໄພຍະໂທດ (ໂທດ

ທາງອາຍາ), ໄດ້ມີການໃຫ້ນິລະໂທດກຳ ຊຶ່ງອົງການປະຕິບັດຄຳຕັດສິນຂອງສານຈະຕ້ອງດຳເນີນການແກ້ໄຂໃຫ້ຖືກຕ້ອງ ດ້ວຍການອອກຄຳສັ່ງປ່ຽນແປງ, ຍົກເລີກ ຫຼື ລົບລ້າງການປະຕິບັດຄຳຕັດສິນຂອງສານໂດຍຂຶ້ນຢູ່ກັບກໍລະນີວ່າອັນໃດ ຄວນເປັນຄຳສັ່ງປ່ຽນແປງ, ອັນໃດຄວນເປັນຄຳສັ່ງຍົກເລີກ ຫຼື ຄຳສັ່ງລົບລ້າງປະຕິບັດຄຳຕັດສິນຂອງສານ ເພື່ອປົກປ້ອງ ສິດ ແລະ ຜົນປະໂຫຍດອັນຊອບທຳຂອງຄູ່ຄວາມ, ຜົນປະໂຫຍດຂອງລັດ ແລະ ສັງຄົມ.

ດັ່ງນັ້ນ, ຈຶ່ງສາມາດເວົ້າໄດ້ວ່າ:

ການປ່ຽນແປງການປະຕິບັດຄຳຕັດສິນຂອງສານໝາຍເຖິງອົງການປະຕິບັດຄຳຕັດສິນຂອງສານດຳເນີນການອອກ ນິຕິກຳດ້ວຍຄຳສັ່ງປ່ຽນແປງການປະຕິບັດຄຳຕັດສິນຂອງສານສ່ວນໃດສ່ວນໜຶ່ງ ຫຼື ທັງໝົດ.

“ການປ່ຽນແປງການປະຕິບັດຄຳຕັດສິນ ໝາຍເຖິງ ການປ່ຽນແປງການປະຕິບັດຄຳຕັດສິນຂອງສານ ສ່ວນໃດ ສ່ວນໜຶ່ງ ຫຼື ທັງໝົດ ທີ່ເຫັນວ່າບໍ່ຖືກຕ້ອງ, ບໍ່ສອດຄ່ອງກັບຄຳຕັດສິນຂອງສານ ຫຼື ກົດໝາຍ”[1].

ການຍົກເລີກການປະຕິບັດຄຳຕັດສິນຂອງສານແມ່ນອົງການປະຕິບັດຄຳຕັດສິນຂອງສານດຳເນີນການອອກນິຕິ ກຳດ້ວຍຄຳສັ່ງຍົກເລີກການປະຕິບັດຄຳຕັດສິນຂອງສານ ເພື່ອກຳນົດຢຸດເຊົາປະຕິບັດຄຳຕັດສິນຂອງສານໂດຍບໍ່ໃຫ້ສືບຕໍ່ ປະຕິບັດຄຳຕັດສິນຂອງສານ.

“ການຍົກເລີກການປະຕິບັດຄຳຕັດສິນ ໝາຍເຖິງ ການຢຸດເຊົາການປະຕິບັດຄຳຕັດສິນຂອງສານ ກ່ຽວກັບການ ຈ່າຍຄ່າທຳນຽມສານ, ຄ່າປັບໃໝ ແລະ/ຫຼື ເງິນຣິບ ຕາມຄຳຕັດສິນຍົກເລີກຂອງສານ”[2]

ການລົບລ້າງປະຕິບັດຄຳຕັດສິນຂອງສານ ໝາຍເຖິງອົງການປະຕິບັດຄຳຕັດສິນຂອງສານທີ່ມີສິດອຳນາດດຳເນີນ ການອອກນິຕິກຳດ້ວຍຄຳສັ່ງຍົກເລີກການປະຕິບັດຄຳຕັດສິນຂອງສານ ເພື່ອກຳນົດຍົກເລີກທັງໝົດການປະຕິບັດຄຳຕັດ ສິນຂອງສານຜ່ານມາແຕ່ຕົ້ນຕະຫຼອດປາຍ.

“ການລົບລ້າງການປະຕິບັດຄຳຕັດສິນ ໝາຍເຖິງ ການຍົກເລີກທັງໝົດການປະຕິບັດຄຳຕັດສິນຂອງສານ ຜ່ານມາ ແຕ່ຕົ້ນຕະຫຼອດປາຍ”[3].

**10. ການຍົກເລີກການປະຕິບັດຄຳຕັດສິນຂອງສານ ກ່ຽວກັບຄ່າທຳນຽມສານ, ຄ່າປັບໃໝ ແລະ/ຫຼື ເງິນຣິບ**

ຜູ້ຖືກປະຕິບັດຄຳຕັດສິນຂອງສານ ທີ່ບໍ່ມີຄວາມສາມາດຈ່າຍຄ່າທຳນຽມສານ, ຄ່າປັບໃໝ ແລະ/ຫຼື ເງິນຣິບ ຕາມຄຳ ຕັດສິນຂອງສານ ຫຼື ໄດ້ປະຕິບັດສ່ວນໃດສ່ວນໜຶ່ງແລ້ວ ແຕ່ບໍ່ສາມາດສືບຕໍ່ປະຕິບັດ ໃຫ້ອົງການປະຕິບັດຄຳຕັດສິນຂອງ ສານ ສະເໜີອົງການໄອຍະການປະຊາຊົນຂັ້ນຂອງຕົນ ຕາມເງື່ອນໄຂ ເພື່ອຖະແຫຼງໃຫ້ສານປະຊາຊົນພິຈາລະນາຕັດສິນ ຍົກເລີກ.

**11. ຄວາມໝາຍ ການຄຸ້ມຄອງ ແລະ ການເກັບຮັກສາສຳນວນຄຳຕັດສິນ**

ສຳນວນຄຳຕັດສິນ ຫຼື ສຳນວນຄະດີ ແມ່ນບັນດາເອກະສານທີ່ເປັນຂໍ້ມູນຫຼັກຖານໃນການດຳເນີນຄະດີທີ່ໄດ້ ລວບລວມໄວ້ໃນເສື້ອປົກສຳນວນຄະດີ ຊຶ່ງປະກອບມີ: ຄຳຮ້ອງຟ້ອງ, ຄຳໃຫ້ການ, ຄຳຕັດສິນ, ຄຳພິພາກສາ, ທີ່ໃຊ້ໄດ້ ຢ່າງເດັດຂາດ, ເອກະສານທີ່ສຳຄັນປະກອບໃນຄຳຕັດສິນເປັນຕົ້ນແມ່ນ ໃບຕາດິນ, ສັນຍາກູ້ຢືມ, ເອກະສານທີ່ເຫັນວ່າ ເປັນຂໍ້ມູນຫຼັກຖານ ແລະ ນອກນັ້ນກໍຍັງມີເອກະສານທີ່ກ່ຽວພັນກັບການຈັດຕັ້ງປະຕິບັດຄຳຕັດສິນຂອງສານຄື ຈົດໝາຍ

---

[1] ຂໍ້ 11, ມາດຕາ 3 ກົດໝາຍວ່າດ້ວຍການປະຕິບັດຄຳຕັດສິນຂອງສານ, ສະບັບເລກທີ 12/ສພຊ, ລົງວັນທີ 17 ພະຈິກ 2021

[2] ຂໍ້ 12, ມາດຕາ 3 ກົດໝາຍວ່າດ້ວຍການປະຕິບັດຄຳຕັດສິນຂອງສານ, ສະບັບເລກທີ 12/ສພຊ, ລົງວັນທີ 17 ພະຈິກ 2021

[3] ຂໍ້ 13, ມາດຕາ 3 ກົດໝາຍວ່າດ້ວຍການປະຕິບັດຄຳຕັດສິນຂອງສານ, ສະບັບເລກທີ 12/ສພຊ, ລົງວັນທີ 17 ພະຈິກ 2021

ບັນທຶກການຈັດຕັ້ງປະຕິບັດຄຳຕັດສິນຕ່າງໆ, ໝາຍຮຽກ, ໝາຍເຊີນ, ຄຳສັ່ງ, ຄຳແນະນຳ ຫຼື ແຈ້ງການ ໃຫ້ຈັດຕັ້ງປະຕິບັດ, ໂຈະ, ປ່ຽນແປງ, ຍົກເລີກ ຫຼື ລຶບລ້າງ ແລະ ເອກະສານອື່ນໆ.

ການຄຸ້ມຄອງ ແລະ ການເກັບຮັກສາສຳນວນຄຳຕັດສິນ ແມ່ນຂະບວນການເກັບຮັກສາສຳນວນຄຳຕັດສິນ ໃຫ້ເປັນລະບົບລະບຽບ, ຮັບປະກັນບໍ່ໃຫ້ມີການຕົກເຮ່ຍເສຍຫາຍໂດຍມີການຈົດບັນທຶກ ຫຼື ພິມເຂົ້າໂປຼແກຣມທາງເອເລັກໂທນິກ ເພື່ອໃຫ້ຊອກຫາໄດ້ງ່າຍດາຍ, ງ່າຍໃນການຕິດຕາມ ກວດກາ, ວ່ອງໄວ, ປອດໄພ, ມີປະສິດທິພາບ ແລະ ນຳມາໃຊ້ຕາມຕ້ອງການ. ເນື່ອງຈາກ ສຳນວນຄຳຕັດສິນເປັນເອກະສານທີ່ສຳຄັນໃນການປະກອບເປັນຂໍ້ມູນຫຼັກຖານ ຈຶ່ງຈຳເປັນຕ້ອງມີການຄຸ້ມຄອງ ແລະ ການເກັບຮັກສາໄວ້ຢ່າງດີ ແລະ ຕ້ອງເກັບໃຫ້ເປັນລະບົບ, ລະບຽບ ສະດວກໃນການຊອກຫາ ບໍ່ໃຫ້ເສຍຫາຍ ໃຫ້ມີຄວາມສະດວກໃນການນຳມາໃຊ້ຕໍ່ວຽກງານ ແລະ ສະດວກຕໍ່ການທຳລາຍເມື່ອໝົດອາຍຸໃນການເກັບຮັກສາ.

ການຄຸ້ມຄອງສຳນວນຄຳຕັດສິນ ໝາຍເຖິງການຄຸ້ມຄອງສຳນວນຄຳຕັດສິນ ທີ່ໄດ້ຮັບສຳນວນຄຳຕັດສິນສົ່ງມາໃຫ້ອົງການຄຸ້ມຄອງການປະຕິບັດຄຳຕັດສິນຂອງສານເພື່ອປະຕິບັດ, ໃນເວລາພວມປະຕິບັດ ສຳນວນຄຳຕັດສິນ ດັ່ງກ່າວຈະຖືກຄຸ້ມຄອງໂດຍພະນັກງານທີ່ຮັບຜິດຊອບຄຳຕັດສິນນັ້ນໂດຍມີການບັນທຶກເຂົ້າປຶ້ມ ຫຼື ພິມເຂົ້າໃນໂປຼແກຣມສະຖິຕິ.

ການເກັບຮັກສາສຳນວນ ໝາຍເຖິງ ເກັບຮັກສາສຳນວນຄຳຕັດສິນ ທີ່ໄດ້ນຳມາຈັດຕັ້ງປະຕິບັດສຳເລັດ ແລະ ມີການປິດສຳນວນຄະດີແລ້ວ, ພະນັກງານທີ່ໄດ້ຈັດຕັ້ງປະຕິບັດຈະສົ່ງສຳນວນໃຫ້ພະນັກງານທີ່ຮັບຜິດຊອບເກັບຮັກສາຕາມຂັ້ນຕອນທີ່ໄດ້ກຳນົດໄວ້.

**12. ຄວາມສຳຄັນ ການຄຸ້ມຄອງ ແລະ ການເກັບຮັກສາສຳນວນຄຳຕັດສິນ, ການສັງລວມສະຖິຕິ ແລະ ການນຳໃຊ້ໂປຣແກຣມຖານຂໍ້ມູນ**

ການຄຸ້ມຄອງ ແລະ ການເກັບຮັກສາສຳນວນຄໍສຕັດສິນ, ການສັງລວມສະຖິຕິ ແລະ ການນຳໃຊ້ໂປຣແກຣມຖານຂໍ້ມູນ ແມ່ນມີຄວາມສຳຄັນຫຼາຍຕໍ່ອົງການປະຕິບັດຄຳຕັດສິນຂອງສານ, ບໍ່ວ່າຈະຢູ່ຂັ້ນສູນກາງ, ຂັ້ນທ້ອງຖິ່ນ ຕ້ອງໄດ້ເອົາໃຈໃສ່ຕໍ່ການຄຸ້ມຄອງ ແລະ ການເກັບຮັກສາສຳນວນເພື່ອບໍ່ໃຫ້ເສຍຫາຍ, ເນື່ອງຈາກວ່າໄລຍະເວລາຂອງການເກັບຮັກສາແມ່ນເປັນເວລາ 20 ປີ ຕາມກົດໝາຍທີ່ໄດ້ກຳນົດໄວ້. ສຳນວນເອກະສານຈຶ່ງຖືກຄຸ້ມຄອງ ແລະ ເກັບຮັກສາໄວ້ເພື່ອເປັນຂໍ້ມູນທີ່ສາມາດປະກອບເຂົ້າໃນການປະຕິບັດວຽກງານໄດ້ຕາມທີ່ຕ້ອງການ ແລະ ປຽບເໝືອນເປັນສູນກາງຄວາມຈຳ ດັ່ງນັ້ນພະນັກງານຜູ້ທີ່ຮັບຜິດຊອບຕ້ອງຄິດເຫັນການເພີ່ມຂຶ້ນຂອງສຳນວນ ຈຶ່ງຈຳເປັນຕ້ອງມີການຈັດເກັບສຳນວນໃຫ້ເປັນລະບົບລະບຽບ, ດຳເນີນໃຫ້ຖືກຕ້ອງຕາມລະບຽບກົດໝາຍ, ມີການນຳເຕັກໂນໂລຊີຕ່າງໆມາໃຊ້ ເປັນຕົ້ນແມ່ນສ້າງເປັນໂປຣແກມຖານຂໍ້ມູນສະເພາະ ເພື່ອໃຫ້ເກີດຄວາມຄ່ອງແຄ້ວ ເມື່ອເວລາຕ້ອງການນຳໃຊ້ສຳນວນ ກໍຄືສະຖິຕິການປະຕິບັດຄຳຕັດສິນຂອງສານ, ສາມາດຄົ້ນຫາທັນກັບເວລາທີ່ຕ້ອງການ ແລະ ເຮັດໃຫ້ວຽກງານດຳເນີນໄປຢ່າງມີປະສິດທິພາບ.

**13. ວິທີການຄຸ້ມຄອງສຳນວນຄຳຕັດສິນ**

"ສຳນວນການປະຕິບັດຄຳຕັດສີນຂອງສານ ທີ່ໄດ້ປະຕິບັດຄຳຕັດສິນຂອງສານສິ້ນສຸດແລ້ວ ໃຫ້ຮັກສາໄວ້ ຊາວປີ ນັບແຕ່ວັນອອກຄຳສັ່ງປິດການປະຕິບັດຄຳຕັດສິນຂອງສານ ເປັນຕົ້ນໄປ, ຫຼັງຈາກນັ້ນຈຶ່ງທຳລາຍຖິ້ມ"[4].

ການຄຸ້ມຄອງສຳນວນຄຳຕັດສິນ ບໍ່ວ່າຈະເປັນຄຳຕັດສິນຄະດີແພ່ງ, ຄະດີອາຍາ ເມື່ອພະນັກງານໄດ້ຮັບສຳນວນຄຳຕັດສິນຂອງສານສິ່ງໃຫ້ຈັດຕັ້ງປະຕິບັດບໍ່ວ່າຈະເປັນ ຄຳສັ່ງ, ຄຳຊີ້ຂາດ, ຄຳຕັດສິນ ແລະ ຄຳພິພາກສາ ທີ່ໃຊ້ໄດ້ເດັດຂາດ ການຄຸ້ມຄອງສຳນວນຄຳຕັດສິນມີ 3 ວິທີຄື: ການຄຸ້ມຄອງທາງເອເລັກໂຕນິກ, ການຄຸ້ມຄອງໂດຍພະນັກງານປະຕິບັດ ແລະ ການຄຸ້ມຄອງໄວ້ໃນສາງ.

**14. ຄວາມໝາຍ ການສັງລວມສະຖິຕິການປະຕິບັດຄຳຕັດສິນຂອງສານ**

**"**ການສັງລວມສະຖິຕິແມ່ນໜຶ່ງໃນລະບົບບັນດາວິທີການເກັບກຳ, ສັງລວມ, ລາຍງານຈຳນວນສະຖິຕິຄຳຕັດສິນຂອງສານ, ວິໄຈ ສາເຫດ ແລະ ຄິດໄລ່ບັນດາການຈັດຕັ້ງປະຕິບັດຄຳຕັດສິນຂອງສານທີ່ໄດ້ປະຕິບັດສຳເລັດ ແລະ ຄ້າງປະຕິບັດ, ສະຖິຕິແມ່ນໜຶ່ງໃນບັນດາໜ້າວຽກຄຸ້ມຄອງມະຫາພາກທີ່ສຳຄັນ ມີບົດບາດສະໜອງບັນດາຂໍ້ມູນສະຖິຕິດ້ວຍຄວາມຊື່ສັດ, ພາວະວິໄສ, ຊັດເຈນ, ຄົບຖ້ວນ, ເພື່ອສັງລວມລາຍງານໃຫ້ທັນໃນການຮັບໃຊ້ບັນດາອົງການລັດເພື່ອຕີລາຄາ, ຄາດຄະເນສະພາບການ, ກຳນົດແຜນຍຸດທະສາດ, ນະໂຍບາຍ, ສ້າງແຜນ ການພັດທະນາເສດຖະກິດ-ສັງຄົມຕອບສະໜອງຄວາມຕ້ອງການຂໍ້ມູນສະຖິຕິຂອງບັນດາການຈັດຕັ້ງ ແລະ ບຸກຄົນ**"**[5].

ການສັງລວມສະຖິຕິແມ່ນເຄື່ອງມືອັນສຳຄັນໃນການຊັ່ງຊາ, ຕິດຕາມກວດກາ ແລະ ປະເມີນຜົນ ກ່ຽວກັບສິ່ງໃດໜຶ່ງທີ່ແນ່ນອນ ທັງນີ້ກໍເພື່ອເປັນການສົມທຽບຜົນທີ່ໄດ້ຮັບຢູ່ໃນແຕ່ລະໄລຍະຢ່າງຊັດເຈນ ຊຶ່ງສະແດງໃຫ້ເຫັນໃນການເພີ່ມຂຶ້ນ, ຫຼຸດລົງ ຫຼື ເທົ່າເດີມ ຂອງລະດັບຄາດໝາຍທີ່ວາງໄວ້ຢ່າງຈະແຈ້ງ. ເປັນພື້ນຖານອັນຈຳເປັນໃນການຈົດກ່າຍ, ການບັນທຶກ ແລະການເກັບກຳຕົວເລກ ຊຶ່ງແມ່ນໄມ້ຫຼາວັດແທກສະພາບການຕ່າງໆ ເປັນອັນລະອຽດ, ງ່າຍໃນການວາງຄາດໝາຍ ແລະ ກະກຽມວິທີແກ້ໄຂໃນຕໍ່ໜ້າຂອງວຽກງານ.

**References:**


1. ກົດໝາຍວ່າດ້ວຍການປະຕິບັດຄຳຕັດສິນຂອງສານ, ສະບັບເລກທີ 12/ສພຊ, ລົງວັນທີ 17 ພະຈິກ 2021;
2. ຕຳລາກໍ່ສ້າງວິຊາຊີບປະຕິບັດຄຳຕັດສິນຂອງສານ ( ເຫຼັ້ມທີ II: ພາກທັກສະສະເພາະ ) ຂອງສະຖາບັນຍຸຕິທຳແຫ່ງຊາດ, ປີ 2020;
3. ກົດໝາຍວ່າດ້ວຍການປະຕິບັດຄຳຕັດສິນຂອງສານປີ 2008;
4. ເອກະສານ ແລະ ນິຕິກຳອື່ນໆ ທີ່ໄດ້ສະເໜີໃຫ້ແຕ່ລະບົດຮຽນ.


[4] ມາດຕາ 52 ວ່າດ້ວຍການປະຕິບັດຄຳຕັດສິນຂອງສານ, ສະບັບເລກທີ 12/ສພຊ, ລົງວັນທີ 17 ພະຈິກ 2021

[5] ຕຳລາກໍ່ສ້າງວິຊາຊີບປະຕິບັດຄຳຕັດສິນຂອງສານ ( ເຫຼັ້ມທີ II: ພາກທັກສະສະເພາະ ) ຂອງສະຖາບັນຍຸຕິທຳແຫ່ງຊາດ, ປີ 2020, ໜ້າ 109